ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ.

ແຂວງຈຳປາສັກ

ເລກທີ ..176../ ຈຂ.ຈສ

ປາກເຊ,ວັນທີ 1.../ 2.... / 2013

# ຂໍ້ຕົກລົງ

## ຂອງເຈົ້າແຂວງໆຈຳປາສັກ

## ວ່າດ້ວຍການອະນຸມັດສ້າງ ໂບດໃໝ່ ຂອງປະຊາຊົນບ້ານຫຼັກ 43 ຖຸ້ມ 42 ເມືອງປາກຊ່ອງ ແຂວງຈຳປາສັກ ທີ່ນັບຖືສາສະໜາເຍຊູ ນິກາຍກາໂຕລິກ

-ອີງຕາມ: ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 03/ ສພຊ,ລົງວັນທີ 21 ຕຸລາ 2003.

-ອີງຕາມ: ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 92 / ນຍ,ລົງວັນທີ 05 /07 / 2002 ວ່າດ້ວຍການຄຸ້ມຄອງ ແລະ ປົກປ້ອງການເຄື່ອນໄຫວສາສະໜາຢູ່ ສປປ ລາວ.

-ອີງຕາມການຄົ້ນຄ້ວາ ແລະ ໃບລາຍງານຂອງພະແນກພາຍໃນແຂວງຈຳປາສັກ ສະບັບເລກທີ 006 /ພນ.ຈສ,ລົງວັນທີ 29 ມັງກອນ 2013.

### ເຈົ້າແຂວງ ແຂວງຈຳປາສັກຕົກລົງ:

ມາດຕາ I: ເຫັນດີອະນຸມັດສ້າງໂບດໃໝ່ຂອງປະຊາຊົນບ້ານຫຼັກ 43 ຖຸ້ມ42 ເມືອງປາກຊ່ອງ ທີ່ນັບຖືສາສະໜາ ເຍຊູ ນິກາຍກາໂຕລິກ ຂະໜາດ 7 ແມັດ x 13.5 ແມັດ ,ໂຄງສ້າງປູນເສີມເຫຼັກ,ມຸງກະເບື້ອງ ກໍ່ດ້ວຍດິນຈີ່ ,ໂດຍທຶນຂອງຜູ້ຖືພາຍໃນບ້ານ ແລະ ສັງຄົມ.

ມາດຕາ II: ມອບໃຫ້ຄະນະກຳມະການ ແລະ ພາກສ່ວນທີ່ກ່ຽວຂ້ອງ ສ້າງໂບດໃໝ່ຂອງສາສະໜາເຍຊູ ນິກາຍກາໂທລິກ ບ້ານຫຼັກ 43 ຖຸ້ມ 42 ເມືອງປາກຊ່ອງ ຈັດຕັ້ງປະຕິບັດດ້ວຍຄວາມຮັບຜິດຊອບສູງ.

ມາດຕາ III: ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນຳໃຊ້ໄດ້ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ເຈົ້າແຂວງ ໆຈຳປາສັກ

ສອນໄຊ ສີພັນດອນ